ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

LALCO
LAO ASEAN LEASING PUBLIC COMPANY

ນະຄອນຫຼວງວຽງຈັນ, ວັນທີ 2 ພະຈິກ 2026

ຮຽນ: - ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖືຢ່າງສູງ
- **ທ່ານ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ (ທຫລ)**
- **ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ**
- **ບັນດາຜູ້ຖືຮຸ້ນຂອງບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ**

ເລື່ອງ: ແຈ້ງມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຄັ້ງທີ 2 ໃນວັນທີ 2 ພະຈິກ 2026.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງ ວັນທີ 11 ທັນວາ 2024.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ ("ລອຊ ຫຼື "ບໍລິສັດ") (ຕໍ່ໄປເອີ້ນວ່າ"ກອງປະຊຸມ") ແມ່ນໄດ້ຈັດຂຶ້ນໃນ ວັນທີ 20 ຕຸລາ 2026 ເວລາ 18:00 ໂມງ ທີ່ຫ້ອງການ ຂອງບໍລິສັດ. ໂດຍການເປັນປະທານຂອງທ່ານ ນາງ ຢຸກິ ສະກອດ, ປະທານສະພາບໍລິຫານ, ພ້ອມດ້ວຍຄະນະສະພາ ບໍລິຫານອີກ 5 ທ່ານ ແລະ ຄະນະບໍລິຫານເປັນຜູ້ສັງເກດການ.

ໃນກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆ ແລະ ມີມະຕິທີ່ຕົກລົງ ດັ່ງລຸ່ມນີ້:

ວັນທີປະຊຸມ	2 ພະຈິກ 2026
ເວລາ	14:00 ໂມງ – 17:00 ໂມງ
ສະຖານທີ່	ຫ້ອງການ LALCO, ຊັ້ນ 2 ອາຄານ NNN, ຖະໜົນໜຸມີຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ປະທານກອງປະຊຸມ	ທ່ານ ນາງ Yuki Scott, ປະທານສະພາບໍລິຫານ

ສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມ

ລ/ດ	ຊື່	ຕຳແໜ່ງ
1	ທ່ານ ນາງ Yuki Scott	ປະທານ
2	ທ່ານ ນາງ Hamuni Ide	ສະມາຊິກ
3	ທ່ານ ນາງ Yuriko Oshima	ຜູ້ອຳນວຍການໃຫຍ່ ແລະ ສະມາຊິກ
4	ທ່ານ ນາງ Mayu Oshima	ສະມາຊິກ
5	ທ່ານ Kenshin Oshima	ທີ່ປຶກສາອາວຸໂສ ແລະ ສະມາຊິກ

ສະມາຊິກສະພາບໍລິຫານ ທັງ 5 ທ່ານ ເຂົ້າຮ່ວມຄົບຖ້ວນ. ກອງປະຊຸມມີອົງປະຊຸມຄົບ ແລະ ຖືກຕ້ອງຕາມລະບຽບການ ໃນການຮັບຮອງມະຕິ ດັ່ງລຸ່ມນີ້.

ຄວາມເປັນມາ

ສືບຕໍ່ຈາກ **ມະຕິຂອງສະພາບໍລິຫານ ລົງວັນທີ 20 ຕຸລາ 2026**, ເຊິ່ງໄດ້ຮັບຮອງ ພາຍຫຼັງການເສຍຊີວິດ ຂອງ ທ່ານ **Yoshihito Oshima** ໃນວັນທີ 14 ຕຸລາ 2026, ສະພາບໍລິຫານ ໄດ້ທົບທວນໂຄງສ້າງ ຂອງສະພາບໍລິຫານ ແລະ ການຄຸ້ມຄອງບໍລິຫານ ຂອງ ບໍລິສັດ.

ເພື່ອເສີມສ້າງການຄຸ້ມຄອງບໍລິຫານ ພາຍໃນປະຫວ ແລະ ຮັບປະກັນຄວາມຕໍ່ເນື່ອງ ຂອງການດຳເນີນທຸລະກິດ ຂອງບໍລິສັດ ໃນ ສປປ ລາວ, ສະພາບໍລິຫານ ໄດ້ທົບທວນປະຫວັດຫຍໍ້ ແລະ ປະສົບການ ຂອງຜູ້ສະໝັກ ທີ່ຖືກສະເໜີ, ແລະ ໄດ້ພິຈາລະນາ ແລະ ຕົກລົງເປັນເອກະສັນແລະ ມີມະຕິເຫັນດີ ດັ່ງລາຍລະອຽດລຸ່ມນີ້.

ມະຕິທີ 1: ການລາອອກ ຂອງສະພາບໍລິຫານຊຸດປັດຈຸບັນ

ສະພາບໍລິຫານ ຕົກລົງ:

1. ບັນທຶກການລາອອກ ຂອງ **ທ່ານ ນາງ Yuki Scott** ຈາກຕຳແໜ່ງ ປະທານ ແລະ ສະມາຊິກສະພາບໍລິຫານ.
2. ບັນທຶກການລາອອກ ຂອງ **ທ່ານ ນາງ Hamuni Ide** ຈາກຕຳແໜ່ງ ສະມາຊິກສະພາບໍລິຫານ.
3. ບັນທຶກການລາອອກ ຂອງ **ທ່ານ ນາງ Yuriko Oshima** ຈາກຕຳແໜ່ງ ຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາ ບໍລິຫານ.
4. ບັນທຶກການລາອອກ ຂອງ **ທ່ານ ນາງ Mayu Oshima** ຈາກຕຳແໜ່ງ ສະມາຊິກສະພາບໍລິຫານ.
5. ບັນທຶກການລາອອກ ຂອງ **ທ່ານ Kenshin Oshima** ຈາກຕຳແໜ່ງ ສະມາຊິກສະພາບໍລິຫານ.
6. ການລາອອກຂ້າງເທິງ ມີຜົນນຳໃຊ້ ນັບແຕ່ວັນທີ 2 ພະຈິກ 2026, ໄດຍຂຶ້ນກັບການຮັບຮູ້ ຂອງກອງປະຊຸມໃຫຍ່ວິສາມັນ ຂອງຜູ້ຖືຮຸ້ນ (ມະຕິທີ 3) ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ.

ມະຕິທີ 2: ການແຕ່ງຕັ້ງ ສະພາບໍລິຫານຊຸດໃໝ່ ແລະ ຜູ້ອຳນວຍການໃຫຍ່

ອີງຕາມຄຸນວຸດທິ ແລະ ປະສົບການ ຂອງຜູ້ສະໝັກ, ສະພາບໍລິຫານ ຕົກລົງແຕ່ງຕັ້ງ ບຸກຄົນດັ່ງລຸ່ມນີ້, ມີຜົນນຳໃຊ້ ນັບແຕ່ ວັນທີ 2 ພະຈິກ 2026, ໂດຍຂຶ້ນກັບການຢັ້ງຢືນ ທີ່ຈຳເປັນ ຕາມກົດລະບຽບ ຂອງບໍລິສັດ ແລະ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ດັ່ງລາຍຊື່ລຸ່ມ :

ລ/ດ	ຊື່	ຕຳແໜ່ງ	ພື້ນຖານການແຕ່ງຕັ້ງ
1	ທ່ານ ນາງ Nguyen Thi Huong Mai (ທ່ານ ນາງ ງວນທິເຮືองมาย)	ປະທານສະພາບໍລິຫານ	ຜູ້ຈັດການພະແນກບໍລິຫານທົ່ວໄປ ຂອງບໍລິສັດ ນັບແຕ່ເດືອນ ພະຈິກ 2023, ຮັບຜິດຊອບດ້ານການເງິນ, ບັນຊີ, ແຜນການ ແລະ ຊັບພະຍາກອນມະນຸດ, ແລະ ລາຍງານຕໍ່ສະພາບໍລິຫານ. ອະດີດຜູ້ຈັດການທີ່ປຶກສາດ້ານຄວາມສ່ຽງ ທີ່ Deloitte ຫວຽດນາມ, ຫົວໜ້າບັນຊີ ທີ່ VinSmart ແລະ Vinbiocare, ແລະ ຜູ້ຈັດການກວດສອບ ທີ່ Ernst & Young ຮ່າໂນ້ຍ (2008–2019). ປະລິນຍາຕີ ບັນຊີ, ມະຫາວິທະຍາໄລ ເສດຖະສາດແຫ່ງຊາດ (National Economics University).
2	ທ່ານ ນາງ Phavanhna Phommasack (ພາ ວັນນາ ພົມມະສັກ)	ຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາບໍລິຫານ	ຜູ້ບໍລິຫານອາວຸໂສ ດ້ານການຂາຍ ແລະ ພັດທະນາທຸລະກິດ ຂອງ ບໍລິສັດ ນັບແຕ່ເດືອນຕຸລາ 2016, ນຳພາຍຸດທະສາດການຂາຍ, ການປ່ອຍສິນເຊື່ອໃໝ່, ການວາງງົບປະມານ ແລະ ການຕິດຕາມ ໜີ້, ແລະ ລາຍງານໂດຍກົງຕໍ່ປະທານ. ປະລິນຍາໂທ ວິສະວະກຳ, The University of Electro-Communications, ໄຕ ກງວ. ພາສາຍີ່ປຸ່ນຄ່ອງແຄ້ວ (JLPT N1).
3	ທ່ານ ນາງ Khonemany Sihavong (ຄອນມະນີ ສີຫາວົງ)	ສະມາຊິກສະພາບໍລິຫານ	ພະນັກງານບັນຊີ ຂອງບໍລິສັດ ນັບແຕ່ປີ 2016. ເຄີຍເປັນ ພະນັກງານບັນຊີ ທີ່ບໍລິສັດ ນ້ຳມັນເຊື້ອໄຟ STAR OIL (2011–2015). ຊັ້ນສູງ ບໍລິຫານທຸລະກິດ, ມະຫາວິທະຍາໄລ ເສດຖາບໍລິຫານທຸລະກິດ.
4	ທ່ານ ນາງ Phetsamai Soundala (ເພັດ ສະໄໝ ສຸນດາລາ)	ສະມາຊິກສະພາບໍລິຫານ	ຫົວໜ້າພະແນກການຕະຫຼາດ, ພະແນກການຂາຍ ແລະ ການ ຕະຫຼາດ ຂອງບໍລິສັດ ນັບແຕ່ປີ 2018, ຄຸ້ມຄອງປະສິດທິພາບ ຂອງທີມງານ, ເປົ້າໝາຍການຂາຍ, ການພົວພັນລູກຄ້າ ແລະ ການປະສານງານ ລະຫວ່າງສຳນັກງານໃຫຍ່ ແລະ ສາຂາ. ຈົບ ການສຶກສາ ດ້ານການທະນາຄານ, ສະຖາບັນການທະນາຄານ (ທະນາຄານແຫ່ງ ສປປ ລາວ).
5	ທ່ານ ນາງ Vinar Phiwsavanh (ວິນາ ພິວສະຫວັນ)	ສະມາຊິກສະພາບໍລິຫານ	ມີປະສົບການ 5 ປີ ໃນວຽກງານການຕະຫຼາດ ຂອງບໍລິສັດ, ລວມທັງ 2 ປີ ໃນຕຳແໜ່ງຫົວໜ້າພະແນກ. ປະລິນຍາຕີ, ສະຖາ ບັນບໍລິຫານທຸລະກິດ ລັດຕະນະ (Rattana Institute of Business Administration).

ມະຕິທີ 3: ກອງປະຊຸມໃຫຍ່ວິສາມັນ ຂອງຜູ້ຖືຮຸ້ນ

ສະພາບໍລິຫານ ຕົກລົງ:

1. ເອີ້ນໂຮມ ກອງປະຊຸມໃຫຍ່ວິສາມັນ ຂອງຜູ້ຖືຮຸ້ນ ເພື່ອຮັບຮູ້ ແລະ ຮັບຮອງ ການລາອອກ ຕາມມະຕິທີ 1 ແລະ ການແຕ່ງຕັ້ງ ຕາມມະຕິທີ 2.
2. ສະເໜີມະຕິສະບັບນີ້ ພ້ອມດ້ວຍປະຫວັດຫຍໍ້ ຂອງຜູ້ຖືກແຕ່ງຕັ້ງ ຕໍ່ກອງປະຊຸມໃຫຍ່ວິສາມັນ ຂອງຜູ້ຖືຮຸ້ນ ເພື່ອຈຸດປະສົງ ດັ່ງກ່າວ.

ມະຕິທີ 4: ການຈົດທະບຽນ ກັບພາກສ່ວນທີ່ກ່ຽວຂ້ອງ

ສະພາບໍລິຫານ ຕົກລົງອະນຸມັດ ແລະ ມອບສິດໃຫ້ບໍລິສັດ ດຳເນີນຂັ້ນຕອນທາງດ້ານກົດໝາຍທັງໝົດ ສຳລັບການປ່ຽນແປງ ສະພາ ບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ກັບພາກສ່ວນທີ່ກ່ຽວຂ້ອງ, ລວມທັງ:

- ທະນາຄານແຫ່ງ ສປປ ລາວ (ທຫລ);
- ຫ້ອງການຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ (LSX); ແລະ
- ກະຊວງອຸດສາຫະກຳ ແລະ ການຄ້າ, ລວມທັງການປັບປຸງ ໃບທະບຽນວິສາຫະກິດ.

ມະຕິທີ 5: ພິຈາລະນາຮັບຮອງ ການດັດແກ້ກົດລະບຽບບໍລິສັດ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ.

ມະຕິທີ 6 : ການມອບສິດທົ່ວໄປ ແລະ ວັນທີມີຜົນບັງຄັບໃຊ້


1. ມອບສິດໃຫ້ ຜູ້ອຳນວຍການໃຫຍ່ ທີ່ໄດ້ຮັບການແຕ່ງຕັ້ງໃໝ່, ທ່ານ ນາງ Phavanhna Phommasack, ລົງລາຍເຊັນ, ຍື່ນ ແລະ ລົງເອກະສານທັງໝົດ, ແລະ ດຳເນີນການທຸກຢ່າງ ທີ່ຈຳເປັນ ເພື່ອໃຫ້ມະຕິສະບັບນີ້ ມີຜົນສັກສິດ.
2. ມະຕິສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ວັນທີ 2 ພະຈິກ 2026, ໄດຍຂຶ້ນກັບມະຕິທີ 3.

ເມື່ອບໍ່ມີວາລະອື່ນໃດອີກ, ປະທານ ໄດ້ປະກາດປິດກອງປະຊຸມ.

ລາຍເຊັ້ນ

ສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມ

ລາຍເຊັ້ນ	
ຊື່	ທ່ານ ນາງ Yuki Scott
ຕຳແໜ່ງ	ປະທານ
ວັນທີ	02 / 11 / 2026

ລາຍເຊັ້ນ	
ຊື່	ທ່ານ ນາງ Hamuni Ide
ຕຳແໜ່ງ	ສະມາຊິກ
ວັນທີ	02 / 11 / 2026

ລາຍເຊັ້ນ	
ຊື່	ທ່ານ ນາງ Yuriko Oshima
ຕຳແໜ່ງ	ຜູ້ອຳນວຍການໃຫຍ່ ແລະ ສະມາຊິກ
ວັນທີ	02 / 11 / 2026

ລາຍເຊັ້ນ	大島真由
ຊື່	ທ່ານ ນາງ Mayu Oshima
ຕຳແໜ່ງ	ສະມາຊິກ
ວັນທີ	02 / 11 / 2026


ລາຍເຊັ້ນ	大島健伸
ຊື່	ທ່ານ Kenshin Oshima
ຕຳແໜ່ງ	ທີ່ປຶກສາອາວຸໂສ ແລະ ສະມາຊິກ
ວັນທີ	02 / 11 / 2026

ກາປະທັບ ບໍລິສັດ:



ການຮັບຮອງການແຕ່ງຕັ້ງ


ຂ້າພະເຈົ້າ, ທ່ານ ນາງ Nguyen Thi Huong Mai, ຂໍຮັບເອົາການແຕ່ງຕັ້ງ ເປັນ ປະທານສະພາບໍລິຫານ ຕາມມະຕິທີ 2, ແລະ ຂໍໃຫ້ຄຳໝັ້ນວ່າ ຈະປະຕິບັດໜ້າທີ່ ເພື່ອຜົນປະໂຫຍດສູງສຸດ ຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ.

ລາຍເຊັນ	
ຊື່	ທ່ານ ນາງ Nguyen Thi Huong Mai
ຕຳແໜ່ງ	ປະທານສະພາບໍລິຫານ
ວັນທີ	02 / 11 / 2026

ຂ້າພະເຈົ້າ, ທ່ານ ນາງ Phavanhna Phommasack, ຂໍຮັບເອົາການແຕ່ງຕັ້ງ ເປັນ ຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາບໍລິຫານ ຕາມມະຕິທີ 2, ແລະ ຂໍໃຫ້ຄຳໝັ້ນວ່າ ຈະປະຕິບັດໜ້າທີ່ ເພື່ອຜົນປະໂຫຍດສູງສຸດ ຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ.

ລາຍເຊັນ	
ຊື່	ທ່ານ ນາງ Phavanhna Phommasack
ຕຳແໜ່ງ	ຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາບໍລິຫານ
ວັນທີ	02 / 11 / 2026

ຂ້າພະເຈົ້າ, ທ່ານ ນາງ Khonemany Sihavong, ຂໍຮັບເອົາການແຕ່ງຕັ້ງ ເປັນ ສະມາຊິກສະພາບໍລິຫານ ຕາມມະຕິທີ 2, ແລະ ຂໍໃຫ້ຄຳໝັ້ນວ່າ ຈະປະຕິບັດໜ້າທີ່ ເພື່ອຜົນປະໂຫຍດສູງສຸດ ຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ.

ລາຍເຊັນ	
ຊື່	ທ່ານ ນາງ Khonemany Sihavong
ຕຳແໜ່ງ	ສະມາຊິກສະພາບໍລິຫານ
ວັນທີ	02 / 11 / 2026

ຂ້າພະເຈົ້າ, ທ່ານ ນາງ **Phetsamai Soundala**, ຂໍຮັບເອົາການແຕ່ງຕັ້ງ ເປັນ ສະມາຊິກສະພາບໍລິຫານ ຕາມມະຕິທີ 2, ແລະ ຂໍໃຫ້ຄຳໝັ້ນວ່າ ຈະປະຕິບັດໜ້າທີ່ ເພື່ອຜົນປະໂຫຍດສູງສຸດ ຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ.

ລາຍເຊັ້ນ	
ຊື່	ທ່ານ ນາງ Phetsamai Soundala
ຕຳແໜ່ງ	ສະມາຊິກສະພາບໍລິຫານ
ວັນທີ	02 / 11 / 2026

ຂ້າພະເຈົ້າ, ທ່ານ ນາງ **Vinar Phiwsavanh**, ຂໍຮັບເອົາການແຕ່ງຕັ້ງ ເປັນ ສະມາຊິກສະພາບໍລິຫານ ຕາມມະຕິທີ 2, ແລະ ຂໍໃຫ້ຄຳໝັ້ນວ່າ ຈະປະຕິບັດໜ້າທີ່ ເພື່ອຜົນປະໂຫຍດສູງສຸດ ຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ.

ລາຍເຊັ້ນ	
ຊື່	ທ່ານ ນາງ Vinar Phiwsavanh
ຕຳແໜ່ງ	ສະມາຊິກສະພາບໍລິຫານ
ວັນທີ	02 / 11 / 2026